| ຂໍ້ມູນທີ່ໄດ້ຮັບຈາກຂະແໜງການທີ່ກ່ຽວຂ້ອງ | |
| --- | --- |
| ຊື່ໃບອະນຸຍາດ | ໃບອະນຸຍາດດຳເນີນທຸລະກິດປະກັນໄພທົ່ວໄປ (ໂຈະຊົ່ວຄາວ) |
| **ປະເພດເອກະສານ** | ໃບອະນຸຍາດດຳເນີນທຸລະກິດ |
| **ວັນທີແກ້ໄຂຂໍ້ມູນລ່າສຸດ** | 09.01.2018 |
| **ພາກສ່ວນຮັບຜິດຊອບ** | ກົມຄຸ້ມຄອງວິສະຫະກິດລັດລົງທຶນ ແລະ ການປະກັນໄພ |
| **ຜູ້ທີ່ສາມາດຍື່ນຂໍເອກະສານ** | ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງສ້າງຕັ້ງ ຫຼື<br>ດຳເນີນທຸລະກິດດ້ານການປະກັນໄພທົ່ວໄປ ຊຶ່ງລວມມີການປະກັນໄພຊັບສິນ,<br>ຄວາມຮັບຜິດຊອບທາງແພ່ງຕໍ່ບຸກຄົນທີສາມ ແລະ<br>ການປະກັນໄພອື່ນທີ່ບໍ່ແມ່ນການປະກັນຊີວິດ (ຕົວຢ່າງ: ປະກັນໄພສຸກຂະພາບ,<br>ປະກັນໄພອຸປະຕິເຫດ, ປະກັນໄພການຂົນສົ່ງ, ປະກັນໄພພາຫະນະ, ປະກັນໄພອັກຄີໄພ,<br>ປະກັນໄພທາງການເງິນ ຫຼື ປະກັນໄພທຸລະກິດ ແລະ ອື່ນໆ). |

| | |
|---|---|
| **ເງື່ອນໄຂໃນການຂໍເອກະສານ** | 1. ບໍລິສັດດັ່ງກ່າວຕ້ອງໄດ້ຮັບໃບອະນຸຍາດລົງທຶນ ຈາກກະຊວງແຜນການ ແລະ ການລົງທຶນ; 2. ຜູ້ສ້າງຕັ້ງບໍລິສັດປະກັນໄພຕ້ອງມີປະຫວັດການດຳເນີນທຸລະກິດທີ່ດີ, ບໍ່ເຄີຍຖືກສານຕັດສິນ ລົງໂທດຕັດອິດສະລະພາບໃນສະຖານການກະທຳຜິດຕໍ່ເສດຖະກິດໂດຍເຈດຕະນາ, ບໍ່ນອນຢູ່ໃນ ບັນຊີລາຍຊື່ຜູ້ກໍ່ການຮ້າຍ ແລະ ອາຊະຍາກຳຂ້າມຊາດ; 3. ຕ້ອງມີຫ້ອງການ ຫຼື ສຳນັກງານໃຫຍ່ທີ່ເໝາະສົມໃນການດຳເນີນທຸລະກິດປະກັນໄພ;4. ມີທຶນຈົດທະບຽນ ຕໍ່າສຸດ 16 ຕື້ກີບ ຕະຫຼອດໄລຍະເວລາດຳເນີນທຸລະກິດ; 5. ຕ້ອງວາງເງິນຄ້ຳປະກັນ 1/3 ຂອງທຶນຈົດທະບຽນ ໄວ້ຢູ່ທະນາຄານໃດໜຶ່ງທີ່ມີຄວາມໝັ້ນຄົງ ທາງດ້ານການເງິນ ທີ່ຕັ້ງຢູ່ ສປປ ລາວ ແລະ ແຈ້ງໃຫ້ກະຊວງການເງິນຮັບຊາບເຖິງຈຳນວນ ເງິນຄ້ຳປະກັນດັ່ງກ່າວ; ໂດຍນັກລົງທຶນຕ້ອງປະຕິບັດຕາມເງື່ອນໄຂດັ່ງຕໍ່ໄປນີ້: (ກ) ຜູ້ລົງທຶນເປັນຜູ້ສະເໜີເປີດບັນຊີ, ການຖອນເງິນ ແລະ ການປິດບັນຊີ ຕ້ອງໄດ້ຮັບການເຫັນ ດີເປັນລາຍລັກອັກສອນຈາກ ກົມຄຸ້ມຄອງ ແລະ ພັດທະນາ ວິສາຫະກິດທີ່ລັດລົງທຶນ ແລະ ປະກັນໄພ ຈຶ່ງສາມາດຖອນໄດ້ ໂດຍອີງຕາມມາດຕາ 94 ຂອງກົດໝາຍວ່າດ້ວຍປະກັນໄພ; (ຂ) ຕ້ອງແຈ້ງໃຫ້ທະນາຄານທີ່ຕົນມີເງິນຝາກຢູ່ນັ້ນຮັບຊາບວ່າ ເຈົ້າໜ້າທີ່ຄຸ້ມຄອງທຸລະກິດປະກັນໄພ ມີອຳນາດໂດຍກົງໃນການກວດສອບຍອດເງິນຝາກຂອງຕົນໄດ້ທຸກເວລາ; ແລະ (ຄ) ການໂອນ ຫຼື ນຳໃຊ້ເງິນຄ້ຳປະກັນຄວາມສ່ຽງຕ້ອງໄດ້ຮັບອະນຸຍາດຈາກກະຊວງການເງິນ; 6. ຕ້ອງມີລາຍຊື່ ແລະ ປະຫວັດການເຮັດວຽກຂອງຜູ້ບໍລິຫານທີ່ຈະໄດ້ຮັບການແຕ່ງຕັ້ງເຂົ້າໃນແຕ່ ລະຕຳແໜ່ງງານ ແລະ ມີພະນັກງານ ຫຼື ບຸກຄະລາກອນທີ່ມີຄວາມຮູ້ຄວາມສາມາດ, ຄວາມຊຳນານ ທາງດ້ານວິຊາຊີບ ແລະ ມີໃບຢັ້ງຢືນ ຫຼື ປະກາດສະນີຍະບັດທາງດ້ານການປະກັນໄພ;7. ຕ້ອງກຳນົດແຜນການດຳເນີນທຸລະກິດໄລຍະສັ້ນ 1 ປີລົງມາ, ໄລຍະກາງ 2-5 ປີ ແລະ ໄລຍະຍາວ 5 ປີຂຶ້ນໄປ; 8. ບໍ່ເຄີຍຖືກຖອນໃບອະນຸຍາດດຳເນີນທຸລະກິດປະກັນໄພ ໃນໄລຍະເວລາ 5 ປີກ່ອນວັນຍື່ນຄຳ ຮ້ອງຂໍໃບອະນຸຍາດດຳເນີນທຸລະກິດປະກັນໄພ; ແລະ 9. ໃນກໍລະນີທີ່ເປັນນັກລົງທຶນຕ່າງປະເທດຕ້ອງມີເງື່ອນໄຂເພີ່ມຕື່ມດັ່ງນີ້: (ກ) ມີປະສົບການໃນການດຳເນີນທຸລະກິດ ປະກັນໄພມາກ່ອນຢ່າງໜ້ອຍ 5 ປີ; (ຂ) ມີໃບອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າຂອງ ບໍລິສັດປະກັນໄພຕ່າງປະເທດ; ແລະ (ຄ) ມີໃບອະນຸຍາດສ້າງຕັ້ງ ແລະ ດຳເນີນທຸລະກິດ ດ້ານປະກັນໄພຈາກປະເທດຕົ້ນທາງຂອງນັກລົງທຶນ. |

| **ກົດໝາຍ ແລະ ນິຕິກຳອື່ນໆ ທີ່ກ່ຽວຂ້ອງ** | | | |
|---|---|---|---|
| **ຊື່** | **ເລກທີ** | **ລົງວັນທີ** | **ໝາຍເຫດ** |

| | | | |
|---|---|---|---|
| ກົດໝາຍວ່າດ້ວຍ ການປະກັນໄພ (ສະບັບປັບປຸງ) | 06/ສພຊ | 21.12.2011 | ພາກທີ II ການປະກັນໄພ (ມາດຕາ 11-<br>IV ການດຳເນີນທຸລະກິດປະກັນໄພ ໝວ<br>ການສ້າງຕັ້ງ ແລະ ການດຳເນີນທຸລະກິດ<br>(ມາດຕາ 17 ເຖິງ ມາດຕາ 25)ໝວດທີ<br>ບໍລິສັດປະກັນໄພ ແລະ ນາຍໜ້າປະກັນ<br>ຮ່ວມທຶນກັບຕ່າງປະເທດ (ມາດຕາ 28<br>ມາດຕາ<br>35)ກົດໝາຍວ່າດ້ວຍການປະກັນໄພສະ<br>ປັດຈຸບັນຢູ່ໃນຂັ້ນຕອນການປັບປຸງ ແລະ<br>ຄາດວ່າຈະປະກາດໃຊ້ໃນມໍ່ໆນີ້) |
| ຄຳແນະນຳ ວ່າດ້ວຍ<br>ການອອກໃບອະນຸຍາດດຳເນີນທຸລະກິດປະກັນໄພ | 770/ກງ | 21.03.2016 | ມາດຕາ 3, 7, 8, 9, 10. |
| ແຈ້ງການ ເລື່ອງ:<br>ການໂຈະຮັບຄຳຮ້ອງຂໍອະນຸຍາດລົງທຶນ<br>ໃນທຸລະກິດປະກັນໄພ ສຳລັບບໍລິສັດທີ່ສ້າງຕັ້ງໃໝ່ | 1199/ຫສນຍ.ກລຂ | 17.08.2016 | |
| ຄຳແນະນຳ ກ່ຽວກັບ ການປະຕິບັດກົດໝາຍ ວ່າດ້ວຍ<br>ການປະກັນໄພ | 539/ກງ | 19.02.2014 | ມາດຕາ 5, 6 ແລະ 15 |
| ແຈ້ງການເລື່ອງ:<br>ສະພາບການຄຸ້ມຄອງການດຳເນີນທຸລະກິດປະກັນໄພໃນ<br>ສປປ ລາວ | 697/ຫສນຍ.ກຄສ | 17.05.2018 | |
| ຂໍ້ຕົກລົງວ່າດ້ວຍລະບຽບການບໍລິຫານຄຸ້ມຄອງ ແລະ<br>ການດຳເນີນທຸລະກິດປະກັນໄພ | 3058/ກງ | 27.09.2018 | |

| **ໃບອະນຸຍາດດຳເນີນການ ຫລື ເອກະສານທີ່ຈຳເປັນ ຫລື ຕິດພັນ** | | |
|---|---|---|
| **ຊື່** | **ປະເພດ** | **ໝາຍເຫດ** |
| ${SUPPORT_NAME} | ${SUPPORT_TYPE} | ${SUPPORT_COMMENT} |

| **ເອກະສານທີ່ຕ້ອງປະກອບສຳລັບການຍື່ນຂໍເອກະສານ** | | |
|---|---|---|
| **ຊື່ເອກະສານ** | **ປະເພດເອກະສານ** | **ຕົວຢ່າງເອກະສານ** |
| ${ATTACHMENT_NAME} | ${ATTACHMENT_TYPE} | ${ATTACHMENT_FILE} |

| **ເອກະສານທີ່ຕ້ອງປະກອບສຳລັບການຕໍ່ອາຍຸ** | | |
|---|---|---|
| ຊື່ເອກະສານ | ປະເພດເອກະສານ | ຕົວຢ່າງເອກະສານ |
| ${ATTACHMENT_NAME_RENEW} | ${ATTACHMENT_TYPE_RENEW} | ${ATTACHMENT_FILE_RENEW} |

| ຮູບແບບການຍື່ນເອກະສານ | | |
|---|---|---|
| **ການຍື່ນເອກະສານ** | ຢູ່ທີ່ຫ້ອງການເຈົ້າໜ້າທີ່ | |
| **ທີ່ຢູ່ຂອງພາກສ່ວນທີ່ຮັບຜິດຊອບ** | ກົມຄຸ້ມຄອງວິສະຫະກິດລັດລົງທຶນ ແລະ ການປະກັນໄພ, ກະຊວງການເງິນ | |
| **ໄລຍະເວລາໃນການ ພິຈາລະນາຄໍາຮ້ອງ (ວັນ)** | 15 | |

| ການຕໍ່ອາຍຸເອກະສານ | |
|---|---|
| **ເອກະສານມີກໍານົດອາຍຸ ຫຼື ບໍ່?** | **ໃບອະນຸຍາດມີອາຍຸການນໍາໃຊ້ຈັກເດືອນ?** |
| ມີ | 12 |
| **ຂັ້ນຕອນ ແລະ ເງື່ອນໄຂສໍາລັບການຕໍ່ອາຍຸເອກະສານ** | |
| **ຂັ້ນຕອນ ແລະ ເງື່ອນໄຂສໍາລັບການຕໍ່ອາຍຸໃບອະນຸຍາດ** | ໃບອະນຸຍາດນີ້ ມີຜົນສັກສິດ 1 ປີ , ເລີ່ມຈາກວັນທີ 1 ມັງກອນ ເຖິງ ວັນທີ 31 ທັນວາ ແລະ ວິສາຫະກິດຕ້ອງຍື່ນຄໍາຮ້ອງຂໍຕໍ່ໃບອະນຸຍາດ ແລະ ຊໍາລະຄ່າທໍານຽມໃນການຕໍ່ໃບອະນຸຍາດ ພາຍໃນ 3 ເດືອນທໍາອິດຂອງປີຕໍ່ໄປ (ເລີ່ມແຕ່ວັນທີ 31 ມີນາ ຂອງທຸກໆ ປີ). |

| ຄ່າທໍານຽມສໍາລັບການຍື່ນຂໍເອກະສານ | | | | |
|---|---|---|---|---|
| **ມີຄ່າໃບຄໍາຮ້ອງ ຫຼື ບໍ່?** | **ຄ່າບໍລິການ** | **ຄ່າທໍານຽມທາງວິຊາການ** | **ຄ່າແບບຟອມ ຄໍາຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ມີ | 0.00 | 10000000.00 | 50000.00 | 10050000.00 |
| **Comments** | ອີງຕາມ ຄໍາແນະນໍາຂອງລັດຖະມົນຕີວ່າການກະຊວງການເງິນ ເລກທີ 770/ກງ, ຄ່າແບບຟອມຄໍາຮ້ອງ ແລະ ຄ່າອອກໃບສັ່ງມອບ (50,000 ກີບ) ແມ່ນເກັບຕາມການເຂົ້າໄປຊື້ແບບຟອມແຕ່ບໍ່ໄດ້ກໍານົດຄ່າທໍານຽມ ແບບຟອມໄວ້ໃນລະບຽບການໃດໆ.ລວມຄ່າໃຊ້ຈ່າຍທັງໝົດແມ່ນ 10,100,000 ກີບ | | | |
| **ຄ່າບໍລິການເພີ່ມເຕີມ** | | | | |

| | | | | |
|---|---|---|---|---|
| ລາຍການຄ່າໃຊ້ຈ່າຍອື່ນໆ | | | | |
| ບໍ່ມີ | 0.00 | 0.00 | 0.00 | 0.00 |
| **ຄໍາ ເຫັນຄ່າ ທໍາ ນຽມເພີ່ມເຕີມ** | | | | |

| **ຄ່າທໍານຽມສໍາລັບການຂໍຕໍ່ອາຍຸເອກະສານ** | | | | |
|---|---|---|---|---|
| **ມີຄ່າຕໍ່ອາຍຸເອກະສານ ຫຼື ບໍ?** | **ຄ່າບໍລິການ** | **ຄ່າທໍານຽມທາງວິຊາການ** | **ຄ່າໃບຄໍາຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ມີ | 0.00 | 2000000.00 | 0.00 | 2000000.00 |
| **ຄໍາເຫັນ** | ອີງຕາມ ຄໍາແນະນໍາຂອງລັດຖະມົນຕີວ່າການກະຊວງການເງິນ ເລກທີ 770/ກງ, ຄ່າອອກໃບສັ່ງມອບ (50,000 ກີບ) ແມ່ນເກັບຕາມການເຂົ້າໄປຊື້ແບບຟອມ ແຕ່ບໍ່ໄດ້ກໍານົດຄ່າທໍານຽມແບບຟອມໄວ້ໃນລະ ບຽບການໃດໆ.ລວມຄ່າໃຊ້ຈ່າຍທັງໝົດແມ່ນ 2,050,000 ກີບ | | | |
| ຄ່າໃຊ້ຈ່າຍອື່ນໆ | | | | |
| ລາຍການຄ່າໃຊ້ຈ່າຍອື່ນໆ | | | | |
| ບໍ່ມີ | 0.00 | 0.00 | 0.00 | 0.00 |
| **ຄໍາ ເຫັນກ່ຽວກັບຄ່າ ທໍາ ນຽມຕໍ່ອາຍຸເພີ່ມເຕີມ** | | | | |